ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

**ສະພາແຫ່ງຊາດ**

# ກົດໝາຍ
# ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ໜ້າທີ່ ຂອງກົດໝາຍ ວ່າດ້ວຍການປົກປັກຮັກສາ ສິ່ງແວດລ້ອມ

ກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ກຳນົດຫລັກການ, ລະບຽບການ ແລະ ບັນດາມາດຕະການອັນຈຳເປັນ ທີ່ແນໃສ່ການຄຸ້ມຄອງ, ການກວດກາ, ການບູລະນະ ຟື້ນຟູ ແລະ ການປົກປ້ອງສິ່ງແວດລ້ອມ ເພື່ອຮັກສາສຸຂະພາບຂອງຄົນ ລວມທັງການປົກປັກຮັກສາແຫລ່ງຊັບພະຍາກອນ ແລະ ຄວາມອຸດົມສົມບູນຂອງທຳມະຊາດ, ຮັບປະກັນການ ພັດທະນາເສດຖະກິດ-ສັງຄົມຂອງຊາດ ຕະຫລອດການລະນານ.

### ມາດຕາ 2. ສິ່ງແວດລ້ອມ

ສິ່ງແວດລ້ອມ ແມ່ນ ສັບພະສິ່ງທັງປວງທີ່ມີຊີວິດ ແລະ ບໍ່ມີຊີວິດ ຊຶ່ງເກີດຂຶ້ນຕາມ ທຳມະຊາດ ຫລື ມະນຸດສ້າງຂຶ້ນ ທີ່ຢູ່ອ້ອມເປົ້າໝາຍໃດໜຶ່ງ ເຊັ່ນ: ຄົນ, ສັດ, ພືດ ແລະ ອື່ນໆ ທີ່ມີສາຍກ່ຽວພັນ ແລະ ສິ່ງຜົນສະທ້ອນ ຊຶ່ງກັນແລະກັນທັງທາງບວກ ແລະ ທາງລົບ ຕໍ່ການດຳລົງຊີວິດ, ການຄົງຕົວ ແລະ ການຂະຫຍາຍຕົວຂອງມະນຸດ ແລະ ທຳມະຊາດ.

ສ່ວນປະກອບຂອງສິ່ງແວດລ້ອມ ມີຄື: ດິນ, ນ້ຳ, ປ່າໄມ້, ພືດ, ສັດ, ຈຸລິນຊີ,, ພູ, ຜາ, ບໍ່ແຮ່, ອາກາດ ຊຶ່ງສ້າງການດຸນດ່ຽງ ຂອງລະບົບນິເວດວິທະຍາ; ສຳລັບວັດຖຸບູຮານ, ຮອງຮ່ອຍປະຫວັດສາດ, ເຂດຕົວເມືອງ, ຊົນນະບົດ, ສິ່ງປຸກສ້າງ, ຄວາມສັ່ນສະເທືອນ, ສຽງ, ແສງ, ສີ, ກິ່ນ ແມ່ນສິ່ງທີ່ສ້າງຂຶ້ນດ້ວຍແຮງງານຂອງມະນຸດ ຊຶ່ງເປັນສ່ວນປະ ກອບສຳຄັນ ຂອງສິ່ງແວດລ້ອມ.

### ມາດຕາ 3. ການປົກປັກຮັກສາສິ່ງແວດລ້ອມ

ການປົກປັກຮັກສາສິ່ງແວດລ້ອມ ແມ່ນທຸກການເຄື່ອນໄຫວທີ່ປະກອບສ່ວນເຂົ້າໃນ ການຮັກສາສິ່ງແວດລ້ອມ ບໍ່ໃຫ້ຖືກທຳລາຍ, ເຮັດໃຫ້ສິ່ງແວດລ້ອມປອດໃສ, ປາສະຈາກມົນລະພິດ, ບໍ່ສົ່ງຜົນສະທ້ອນອັນບໍ່ດີ ຕໍ່ສຸຂະພາບຂອງຄົນ, ສັດ, ພືດ ແລະ ຄວາມດຸນດ່ຽງຂອງລະບົບນິເວດວິທະຍາ.

**ມາດຕາ 4. ພັນທະໃນການປົກປັກຮັກສາ ສິ່ງແວດລ້ອມ**

ລັດ ຊີ້ນຳນຳພາ ແລະສົ່ງເສີມການປົກປັກຮັກສາສິ່ງແວດລ້ອມ ດ້ວຍການເຜີຍແຜ່ຂໍ້ມູນຂ່າວສານ, ສ້າງຈິດສຳນຶກຄວາມຮັບຮູ້ ແລະ ສຶກສາອົບຮົມ ໃຫ້ພົນລະເມືອງ ເຫັນໄດ້ຄວາມສຳຄັນຂອງສິ່ງແວດລ້ອມ ໃນການດຳລົງຊີວິດປະຈຳວັນ ລວມທັງການປຸກລະດົມຊຸກຍູ້, ການປະຕິບັດນະໂຍບາຍ ແລະ ລະບຽບກົດໝາຍກ່ຽວກັບສິ່ງແວດລ້ອມຢ່າງເຂັ້ມງວດ. ພົນລະເມືອງລາວ, ຊາວຕ່າງດ້າວ, ຄົນບໍ່ມີສັນຊາດ ແລະຄົນຕ່າງປະເທດທີ່ດຳເນີນການຜະລິດ ຫລື ເຄື່ອນໄຫວວຽກງານໃດໜຶ່ງ ລ້ວນແຕ່ມີພັນທະໃນການປົກປັກຮັກສາສິ່ງແວດລ້ອມ.

**ມາດຕາ 5. ຫລັກການພື້ນຖານກ່ຽວກັບການປົກປັກຮັກສາ ສິ່ງແວດລ້ອມ**

ຫລັກການພື້ນຖານ ກ່ຽວກັບການປົກປັກຮັກສາ ສິ່ງແວດລ້ອມ ມີຄື:

1. ຕ້ອງເອົາການປ້ອງກັນ ສິ່ງແວດລ້ອມ ເປັນວຽກງານຕົ້ນຕໍ; ເອົາການແກ້ໄຂ ແລະ ການບູລະນະຟື້ນຟູສິ່ງແວດລ້ອມ ເປັນວຽກງານສຳຄັນ;
2. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຕ້ອງມີແຜນການປົກປັກຮັກສາສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ;
3. ທຸກຄົນ ແລະ ທຸກອົງການຈັດຕັ້ງຢູ່ໃນ ສປປລາວ ຕ້ອງມີພັນທະປົກປັກຮັກສາສິ່ງແວດລ້ອມ;
4. ຜູ້ທີ່ກໍ່ຄວາມເສັຍຫາຍຕໍ່ສິ່ງແວດລ້ອມ ຕ້ອງມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ;
5. ຕ້ອງນຳໃຊ້ ຊັບພະຍາກອນທຳມະຊາດ, ວັດຖຸດິບ ແລະ ພະລັງງານ ຢ່າງປະຢັດ, ຫລຸດຜ່ອນບັນດາມົນລະພິດ, ສິ່ງເສດເຫລືອ ເພື່ອການພັດທະນາແບບຍືນຍົງ.

**ມາດຕາ 6. ການພົວພັນ ແລະ ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ແລະ ການຮ່ວມມືສາກົນກ່ຽວກັບການຈັດຕັ້ງປະຕິບັດວຽກງານປົກປັກຮັກສາ ແລະ ພັດທະນາສິ່ງແວດລ້ອມ.

## ພາກທີ II
## ການປ້ອງກັນ ສິ່ງແວດລ້ອມ

### ໝວດທີ 1
### ການປ້ອງກັນ ສິ່ງແວດລ້ອມ

**ມາດຕາ 7. ການປ້ອງກັນ ສິ່ງແວດລ້ອມ**

ການປ້ອງກັນສິ່ງແວດລ້ອມ ແມ່ນ ການເຄື່ອນໄຫວສະກັດກັ້ນທຸກເຫດການທີ່ຈະເກີດຂຶ້ນ ຫລື ພວມເກີດຂຶ້ນຊຶ່ງເປັນສາເຫດເຮັດໃຫ້ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຖືກທຳລາຍ ຫລື ເສື່ອມໂຊມລົງ.

## ມາດຕາ 8. ການປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ

ການປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແມ່ນ ຂະບວນການ ຄາດຄະເນ ຜົນກະທົບ ຕໍ່ສິ່ງແວດລ້ອມ ຊຶ່ງເກີດຂຶ້ນຈາກໂຄງການພັດທະນາ ແລະ ກິດຈະການຕ່າງໆ ພ້ອມທັງກຳນົດ ວິທີການ, ມາດຕະການຕ່າງໆ ເພື່ອແກ້ໄຂ ແລະຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ.

1. ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຕ້ອງອອກລະບຽບການ ລວມ ກ່ຽວກັບຂະບວນການ ແລະ ວິທີການປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ;
2. ຂະແໜງການທີ່ກ່ຽວຂ້ອງກັບບັນດາໂຄງການພັດທະນາ ແລະກິດຈະການຕ່າງໆ ທີ່ຕິດພັນກັບຂະແໜງການຂອງຕົນຕ້ອງອອກລະບຽບການກ່ຽວກັບຂະບວນການ ແລະວິທີການປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ໂດຍອີງໃສ່ລະບຽບການລວມ ທີ່ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມວາງອອກ;
3. ໂຄງການພັດທະນາ ແລະກິດຈະການຕ່າງໆ ທີ່ເຫັນວ່າມີຜົນກະທົບຕໍ່ສິ່ງແວດລ້ອມ ກ່ອນສ້າງໂຄງການ ຕ້ອງສະເໜີບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ໃຫ້ຖືກຕ້ອງຕາມລະບຽບການຕ່າງໆ ທີ່ໄດ້ກຳນົດໄວ້ໃນຂໍ້ທີໜຶ່ງ ແລະ ຂໍ້ທີສອງ ຂອງມາດຕານີ້ ເພື່ອສະເໜີໃຫ້ ອົງການຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມທີ່ໄດ້ຮັບ ການມອບໝາຍພິຈາລະນາອອກໃບຢັ້ງຢືນ ດ້ານສິ່ງແວດລ້ອມ;
4. ໂຄງການພັດທະນາ ແລະ ກິດຈະການຕ່າງໆ ຊຶ່ງໄດ້ດຳເນີນການມາກ່ອນການ ປະກາດໃຊ້ກົດໝາຍສະບັບນີ້ ທີ່ເຫັນວ່າສ້າງຄວາມເສັຍຫາຍ ຕໍ່ສິ່ງແວດລ້ອມ ຕ້ອງໄດ້ ສະເໜີບັນດາມາດຕະການ, ວິທີການ ແລະ ການດຳເນີນການແກ້ໄຂບັນຫາສິ່ງແວດລ້ອມໃຫ້ອົງການຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມ ທີ່ໄດ້ຮັບການມອບໝາຍ ພິຈາລະນາອອກໃບຢັ້ງຢືນ ດ້ານສິ່ງແວດລ້ອມ;
5. ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຕ້ອງມີການເຂົ້າຮ່ວມຂອງອຳນາດການ ປົກຄອງທ້ອງຖິ່ນ, ອົງການຈັດຕັ້ງມະຫາຊົນ ແລະ ປະຊາຊົນ ຊຶ່ງຈະໄດ້ຮັບຜົນກະທົບຈາກໂຄງການພັດທະນາ ແລະກິດຈະການດັ່ງກ່າວ.

## ມາດຕາ 9. ການນຳໃຊ້ເຕັກໂນໂລຊີ

ໃນການຜະລິດ, ການດຳເນີນທຸລະກິດ ຕ້ອງນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າແທດເໝາະກັບສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມ, ມີຜົນກະທົບໜ້ອຍທີ່ສຸດ ຕໍ່ສິ່ງແວດ ລ້ອມ ແລະ ປະຕິບັດໃຫ້ໄດ້ຕາມມາດຕະຖານເຕັກນິກ ທີ່ຂະແໜງການກ່ຽວຂ້ອງວາງອອກ ຢ່າງເຂັ້ມງວດ.

ການນຳເຂົ້າ ຫລື ການຖ່າຍທອດເຕັກໂນໂລຊີ ທີ່ພົວພັນເຖິງການປົກປັກຮັກສາສິ່ງແວດລ້ອມ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງ ແລະ ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ.

**ມາດຕາ 10. ການກໍ່ສ້າງ ແລະ ການສ້ອມແປງ**

ບຸກຄົນ ຫລືການຈັດຕັ້ງ ທີ່ດຳເນີນການກໍ່ສ້າງ ຫລືການສ້ອມແປງ ເຊັ່ນ: ຖະໜົນຫົນທາງ, ຂົວ, ລະບົບນ້ຳປະປາ, ການສ້ອມແປງ, ອັດສີດ, ຕາໜ່າງໂທລະຄົມມະນາຄົມ, ໄຟຟ້າ ແລະ ສິ່ງປຸກສ້າງຕ່າງໆ ຕ້ອງມີວິທີການປ້ອງກັນ ອັນຕະລາຍ ທີ່ຈະເກີດຂຶ້ນ ພ້ອມທັງມີມາດຕະການສະກັດກັ້ນ ແລະ ແກ້ໄຂບັນຫາ ທີ່ກໍ່ໃຫ້ເກີດມົນລະພິດ, ຝຸ່ນລະອອງ, ຄວາມສັ່ນ ສະເທືອນ, ສຽງ, ແສງ, ສີ, ກິ່ນ, ສິ່ງເສດເຫລືອ ແລະ ສິ່ງກີດຂວາງຕ່າງໆໃຫ້ໄດ້ຕາມມາດຕະຖານ, ລະບຽບການ ທີ່ຂະແໜງການກ່ຽວຂ້ອງ ແລະ ອົງການຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມ ວາງອອກ.

## ໝວດທີ 2
## ການປ້ອງກັນ, ການຂຸດຄົ້ນ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດ

**ມາດຕາ 11. ຊັບພະຍາກອນທຳມະຊາດ**

ຊັບພະຍາກອນທຳມະຊາດ ແມ່ນສິ່ງທີ່ມີຊີວິດ ແລະບໍ່ມີຊີວິດທີ່ເກີດຂຶ້ນຕາມທຳມະຊາດ ເຊັ່ນ: ດິນ, ນ້ຳ, ອາກາດ, ປ່າໄມ້, ຊີວະນາໆພັນ, ບໍ່ແຮ່, ຫີນ ຊຶ່ງເປັນເງື່ອນໄຂອັນຈຳເປັນ ໃຫ້ແກ່ ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ ແລະ ການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ.

**ມາດຕາ 12. ປະເພດ ຊັບພະຍາກອນ ທຳມະຊາດ**

ຊັບພະຍາກອນ ທຳມະຊາດ ມີ 2 ປະເພດຄື:

1. ຊັບພະຍາກອນທຳມະຊາດທີ່ທົດແທນຄືນໄດ້ ແມ່ນ ຊັບພະຍາກອນທີ່ບໍ່ໝົດເປັນ ເຊັ່ນ: ດິນ ນ້ຳ, ອາກາດ, ປ່າໄມ້, ຊີວະນາໆພັນ. ຖ້າຫາກມີການຄຸ້ມຄອງ, ການປົກປັກຮັກສາ, ການຂຸດຄົ້ນ ແລະການນຳໃຊ້ຊັບພະຍາກອນດັ່ງກ່າວຢ່າງຖືກຕ້ອງຕາມແຜນການ ແລະ ຕາມຫລັກວິຊາການ ຈຶ່ງບໍ່ບົກແຫ້ງເປັນຈັກເທື່ອ.
2. ຊັບພະຍາກອນທຳມະຊາດທີ່ທົດແທນຄືນບໍ່ໄດ້ ແມ່ນຊັບພະຍາກອນທີ່ໝົດເປັນ ເຊັ່ນ: ບໍ່ແຮ່, ຫີນ. ຖ້າຫາກມີການຄຸ້ມຄອງ ແລະ ການປົກປັກຮັກສາ ຕາມແຜນການ, ການຂຸດຄົ້ນ ແລະ ການນຳໃຊ້ຊັບພະຍາກອນດັ່ງກ່າວຢ່າງສົມເຫດສົມຜົນ ຈຶ່ງສາມາດ ຍືນຍົງໄປຮອດຫລາຍເຊັ່ນຄົນ.

**ມາດຕາ 13. ພັນທະໃນການປົກປັກຮັກສາ ຊັບພະຍາກອນທຳມະຊາດ**

ບຸກຄົນ ແລະການຈັດຕັ້ງ ລ້ວນແຕ່ມີພັນທະປົກປັກຮັກສາຊັບພະຍາກອນທຳມະຊາດ. ເມື່ອເຫັນເຫດການທີ່ສ້າງຄວາມເສັຍຫາຍ ຕໍ່ຊັບພະຍາກອນທຳມະຊາດ ຕ້ອງລາຍງານໃຫ້ ອົງການທີ່ກ່ຽວຂ້ອງຊາບ ເພື່ອມີວິທີການປ້ອງກັນ ແລະ ແກ້ໄຂຢ່າງທັນການ.

**ມາດຕາ 14. ມາດຕະການຄຸ້ມຄອງການຂຸດຄົ້ນ ແລະການນຳໃຊ້ຊັບພະຍາກອນທຳມະຊາດ**

ບຸກຄົນ ຫລື ການຈັດຕັ້ງ ທີ່ດຳເນີນການຂຸດຄົ້ນ, ການຂົນສົ່ງ, ການເກັບຮັກສາ, ການ ປຸງແຕ່ງ ຫລື ການນຳໃຊ້ຊັບພະຍາກອນທຳມະຊາດ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍທີ່ດິນ, ກົດໝາຍປ່າໄມ້, ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫລ່ງນ້ຳ, ກົດໝາຍວ່າດ້ວຍບໍ່ແຮ່, ກົດໝາຍວ່າດ້ວຍກະສິກຳ ລວມທັງລະບຽບກົດໝາຍອື່ນໆ ທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

**ມາດຕາ 15. ການປົກປັກຮັກສາ ຊີວະນາໆພັນ**

ຊີວະນາໆພັນ ຫລື ຄວາມຫລາກຫລາຍທາງດ້ານຊີວະສາດ ແມ່ນ ຄວາມຫລາກຫລາຍ ຂອງລະບົບນິເວດວິທະຍາ, ຊະນິດ ແລະ ແນວພັນຂອງສິ່ງທີ່ມີຊີວິດ ເຊັ່ນ: ພືດ, ສັດ, ແມງໄມ້ ແລະ ຈຸລິນຊີ ຢູ່ໃນຂອບເຂດທຳມະຊາດໃດໜຶ່ງ.

ອົງການ ວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຕ້ອງສ້າງລະບຽບການລວມ ແລະ ມາດຕະການກ່ຽວກັບການຄຸ້ມຄອງຊີວະນາໆພັນ.

ອຳນາດການປົກຄອງທ້ອງຖິ່ນ, ຂະແໜງການທີ່ກ່ຽວຂ້ອງ ຕ້ອງຈັດສັນເຂດອະນຸລັກ ຊີວະນາໆພັນ ແລະ ກຳນົດປະເພດຫວງຫ້າມແລະບໍ່ຫວງຫ້າມ ເພື່ອປົກປ້ອງ, ພັດທະນາ ແລະ ຜັນຂະຫຍາຍແນວພັນດັ່ງກ່າວ.

ທຸກການນຳເຂົ້າ-ສົ່ງອອກ ຊະນິດ ແນວພັນຂອງພືດ, ສັດ, ແມງໄມ້ ແລະຈຸລິນຊີຕ່າງໆ ຕ້ອງປະຕິບັດຕາມລະບຽບການ ແລະ ມາດຕະການກ່ຽວກັບ ການຄຸ້ມຄອງຊີວະນາໆພັນ ຢ່າງເຂັ້ມງວດ.

**ມາດຕາ 16. ການປ້ອງກັນເຂດອະນຸລັກມໍລະດົກ ທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ**

ບຸກຄົນ ຫລື ການຈັດຕັ້ງ ທີ່ດຳເນີນການຜະລິດ, ທຸລະກິດ, ການບໍລິການ ຫລືກິດຈະການໃດໜຶ່ງ ຊຶ່ງຈະສົ່ງຜົນສະທ້ອນອັນບໍ່ດີ ຕໍ່ເຂດມໍລະດົກທາງດ້ານວັດທະນະທຳ, ປະຫວັດສາດ ແລະທຳມະຊາດ ເຊັ່ນ: ເຂດມີວັດຖຸບູຮານ, ປູສະນີຍະສະຖານ, ຮ່ອງຮອຍປະຫວັດສາດ, ເຂດທ່ອງທ່ຽວ, ເຂດທິວທັດທຳມະຊາດ ຫລືເຂດປ່າສະຫງວນ ຕ້ອງປະຕິບັດຕາມ ລະບຽບການ ແລະ ມາດຕະການຕ່າງໆທີ່ຂະແໜງການ ແລະອຳນາດການປົກຄອງທີ່ກ່ຽວຂ້ອງ ວາງອອກ ຢ່າງເຂັ້ມງວດ.

## ໝວດທີ 3
## ການປ້ອງກັນ ແລະຕ້ານໄພພິບັດ

**ມາດຕາ 17. ໄພພິບັດ**

ໄພພິບັດ ແມ່ນ ປະກົດການທາງທຳມະຊາດ ຫລື ເຫດການໃດໜຶ່ງທີ່ເກີດຂຶ້ນ ຈາກ ທຳມະຊາດ ຫລື ຈາກການກະທຳຂອງຄົນ ຊຶ່ງສ້າງຄວາມເສັຍຫາຍຢ່າງຮ້າຍແຮງ ຕໍ່ສຸຂະພາບ, ຊີວິດ, ຊັບສິນຂອງປະຊາຊົນ ແລະ ຕໍ່ສິ່ງແວດລ້ອມ ເຊັ່ນ: ອຸທົກກະໄພ, ໄພແຫ້ງແລ້ງ, ອັກຄີໄພ, ວາຕະໄພ, ດິນເຊາະເຈື່ອນ, ສັດຕູພືດລະບາດ, ໂລກລະບາດ, ແຜ່ນດິນໄຫວ, ນ້ຳມັນຮົ່ວໄຫລ ແລະ ອື່ນໆ .

**ມາດຕາ 18. ພັນທະໃນການປ້ອງກັນ ແລະ ຕ້ານໄພພິບັດ**

ບຸກຄົນ ແລະ ການຈັດຕັ້ງລ້ວນແຕ່ມີພັນທະປ້ອງກັນ ແລະ ຕ້ານໄພພິບັດ. ເມື່ອເຫັນວ່າ ໄພພິບັດຈະເກີດຂຶ້ນ ຫລືພວມເກີດຂຶ້ນ ຕ້ອງລາຍງານໃຫ້ອຳນາດການປົກຄອງທ້ອງຖິ່ນ ຫລື ການຈັດຕັ້ງທີ່ຢູ່ໃກ້ຊາບໂດຍດ່ວນ. ອຳນາດການປົກຄອງທ້ອງຖິ່ນ ຫລື ການຈັດຕັ້ງດັ່ງກ່າວ ຕ້ອງປະສານສົມທົບກັບຂະແໜງການຕ່າງໆຂອງລັດ ແລະ ສັງຄົມ ເພື່ອຊອກຫາວິທີປ້ອງກັນ ແລະ ຕ້ານໄພພິບັດດັ່ງກ່າວ ພ້ອມກັນນັ້ນ ກໍຕ້ອງປຸກລະດົມປະຊາຊົນ ແລະ ອົງການຈັດຕັ້ງຕ່າງໆ ປະກອບສ່ວນທາງດ້ານສະຕິປັນຍາ, ແຮງງານ, ທຶນຮອນ, ພາຫະນະ, ອຸບປະກອນຕ່າງໆທີ່ຈຳເປັນ ເພື່ອປ້ອງກັນ ແລະ ຕ້ານໄພພິບັດນັ້ນໃຫ້ທັນເວລາ.

ຖ້າໄພພິບັດ ຫາກເກີດຂຶ້ນໃນຫລາຍທ້ອງຖິ່ນໃກ້ຄຽງກັນ, ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງໄດ້ປະສານສົມທົບກັນ ເພື່ອຊອກຫາວິທີການປ້ອງກັນ ແລະຕ້ານໄພພິບັດ ດັ່ງກ່າວຢ່າງເຂັ້ມງວດ.

**ມາດຕາ 19. ຄະນະກຳມະການປ້ອງກັນ ແລະ ຕ້ານໄພພິບັດແຫ່ງຊາດ**

ລັດຖະບານສ້າງຕັ້ງ ຄະນະກຳມະການປ້ອງກັນ ແລະ ຕ້ານໄພພິບັດແຫ່ງຊາດຂຶ້ນ, ຄະນະກຳມະການ ດັ່ງກ່າວ ຕ້ອງປະສານສົມທົບກັບຂະແໜງການ ແລະ ອຳນາດການປົກຄອງທ້ອງຖິ່ນບ່ອນທີ່ໄພພິບັດຈະເກີດຂຶ້ນ, ພວມເກີດຂຶ້ນ ຫລືເກີດຂຶ້ນແລ້ວ ເພື່ອສ້າງແຜນການ, ກຳນົດມາດຕະການຕ່າງໆກ່ຽວກັບການປ້ອງກັນ, ການຕ້ານໄພພິບັດ ແລະການບູລະນະຟື້ນຟູ ບ່ອນປະສົບໄພພິບັດ, ພ້ອມກັນນັ້ນ ກໍຕ້ອງຕິດຕາມກວດກາຢ່າງເປັນປົກກະຕິ ເຂດ ຫລື ບ່ອນທີ່ອາດຈະເກີດໄພພິບັດໃນຕໍ່ໜ້າ.

## ພາກທີ III
## ການຄວບຄຸມມົນລະພິດ

### ໝວດທີ 1
### ມົນລະພິດ

**ມາດຕາ 20. ມົນລະພິດ**

ມົນລະພິດ ແມ່ນ ສະພາວະຂອງສິ່ງແວດລ້ອມ ທີ່ມີການປ່ຽນແປງທາງດ້ານວັດຖຸ, ຊີວະ ແລະ ເຄມີ ຍ້ອນມີສານ ຫລື ທາດຕ່າງໆເຈືອປົນຢູ່ໃນນ້ຳ, ດິນ, ອາກາດ ເກີນມາດຕະຖານຄຸນນະພາບສິ່ງແວດລ້ອມທີ່ໄດ້ກຳນົດໄວ້ ຊຶ່ງເປັນສາເຫດເຮັດໃຫ້ສິ່ງແວດລ້ອມເປັນພິດ ແລະ ສົ່ງຜົນສະທ້ອນອັນບໍ່ດີ ຕໍ່ສຸຂະພາບ, ຊີວິດຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ.

**ມາດຕາ 21. ປະເພດມົນລະພິດ**

ປະເພດມົນລະພິດ ປະກອບດ້ວຍ: ມົນລະພິດທາງນ້ຳ, ມົນລະພິດທາງດິນ, ມົນລະພິດທາງອາກາດ, ມົນລະພິດທີ່ເກີດຈາກສານເຄມີເປັນພິດ, ທາດກຳມັນຕະພາບລັງສີ, ຈາກສິ່ງເສດເຫລືອ ແລະມົນລະພາວະທີ່ເກີດຈາກການລົບກວນຂອງຄວາມສັ່ນສະເທືອນ, ສຽງ, ແສງ, ສີ ແລະ ກິ່ນ.

ມົນລະພິດທາງນ້ຳ, ດິນ, ອາກາດ ແມ່ນສະພາວະຂອງນ້ຳ, ດິນ, ອາກາດທີ່ມີການປ່ຽນແປງທາງວັດຖຸ, ຊີວະ ແລະ ເຄມີ ຍ້ອນມີສານ ຫລື ທາດຕ່າງໆເຈືອປົນ ເກີນມາດຕະຖານຄຸນນະພາບຂອງນ້ຳ, ດິນ, ອາກາດ ທີ່ໄດ້ກຳນົດໄວ້ ຊຶ່ງເປັນສາເຫດເຮັດໃຫ້ເປັນພິດ ແລະ ສົ່ງຜົນສະທ້ອນອັນບໍ່ດີ ຕໍ່ສຸຂະພາບ, ຊີວິດຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ.

ມົນລະພິດຈາກສິ່ງເສດເຫຼືອ ແມ່ນ ມົນລະພິດທີ່ເກີດຈາກວັດຖຸສິ່ງຂອງ ທີ່ເປັນທາດແຂງ, ທາດແຫລວ ຫລື ທາດອາຍ ທີ່ເປັນອັນຕະລາຍ ຫລື ບໍ່ເປັນອັນຕະລາຍ ຊຶ່ງບໍ່ຖືກນຳໃຊ້ເຂົ້າໃນການຜະລິດ ຫລື ການຊົມໃຊ້ຂອງສັງຄົມ ເຈືອປົນໃນສິ່ງແວດລ້ອມເກີນມາດຕະຖານຄຸນນະພາບສິ່ງແວດລ້ອມທີ່ໄດ້ກຳນົດໄວ້ ຊຶ່ງສົ່ງຜົນສະທ້ອນອັນບໍ່ດີຕໍ່ສຸຂະພາບ, ຊີວິດ ຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ.

ມົນລະພິດຈາກສານເຄມີທີ່ເປັນພິດ ແມ່ນ ມົນລະພິດທີ່ເກີດຈາກວັດຖຸ ຫລື ທາດເບື່ອ ທີ່ເຈືອປົນໃນສິ່ງແວດລ້ອມ ເກີນມາດຕະຖານຄຸນນະພາບສິ່ງແວດລ້ອມ ທີ່ໄດ້ກຳນົດໄວ້ ຊຶ່ງສົ່ງຜົນສະທ້ອນອັນບໍ່ດີ ຕໍ່ສຸຂະພາບ, ຊີວິດຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ.

ມົນລະພິດຈາກທາດກຳມັນຕະພາບລັງສີ ແມ່ນມົນລະພິດທີ່ເກີດຈາກທາດທີ່ແຜ່ກະຈາຍອານຸພາບຂອງລັງສີຢ່າງຕໍ່ເນື່ອງ ເກີນມາດຕະຖານຄຸນນະພາບສິ່ງແວດລ້ອມ ທີ່ໄດ້ກຳນົດໄວ້ ຊຶ່ງເປັນອັນຕະລາຍຕໍ່ຮ່າງກາຍ ຫລື ຈຸລັງຂອງສິ່ງທີ່ມີຊີວິດຕ່າງໆ.

ມົນລະພາວະ ທີ່ເກີດຈາກຄວາມສັ່ນສະເທືອນ, ສຽງ, ແສງ, ສີ ແລະ ກິ່ນ ແມ່ນການລົບກວນຈາກ ຄວາມສັ່ນສະເທືອນ, ສຽງ, ແສງ, ສີ ແລະ ກິ່ນ ເກີນມາດຕະຖານ ທີ່ໄດ້ກຳນົດໄວ້ ຊຶ່ງສົ່ງຜົນສະທ້ອນອັນບໍ່ດີ ຕໍ່ສຸຂະພາບ, ຊີວິດຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ.

## ໝວດທີ 2
## ພັນທະ/ແລະ ມາດຕະການ/ການຄວບຄຸມມົນລະພິດ

**ມາດຕາ 22. ພັນທະໃນການຄວບຄຸມມົນລະພິດ**

ບຸກຄົນ ແລະ ການຈັດຕັ້ງ ລ້ວນແຕ່ມີພັນທະເຂົ້າຮ່ວມໃນການຄວບຄຸມມົນລະພິດ. ສຳລັບຜູ້ທີ່ດຳເນີນການຜະລິດ, ທຸລະກິດ ເຊັ່ນ: ອຸດສາຫະກຳ, ການບໍລິການ, ການກະສິກຳ- ປ່າໄມ້, ຫັດຖະກຳ ຫລື ກິດຈະການອື່ນໆ ທີ່ສ້າງມົນລະພິດ ຕ້ອງນຳໃຊ້ເຕັກໂນໂລຊີ ແລະ ຕິດຕັ້ງອຸປະກອນຕ່າງໆເພື່ອຄວບຄຸມມົນລະພິດໃຫ້ໄດ້ຕາມມາດຕະຖານຄຸນນະພາບສິ່ງແວດ ລ້ອມທີ່ໄດ້ກຳນົດໄວ້.

**ມາດຕາ 23. ມາດຕະການປ້ອງກັນ ແລະ ຄວບຄຸມມົນລະພິດ**

ອົງການຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມແຕ່ລະຂັ້ນ ຕ້ອງສ້າງລະບຽບການ ແລະ ກຳນົດມາດຕະຖານຄຸນນະພາບສິ່ງແວດລ້ອມກ່ຽວກັບການປ້ອງກັນ ແລະ ຄວບຄຸມມົນລະພິດ ຕາມພາລະບົດບາດ ແລະໜ້າທີ່ຂອງຕົນ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

ບຸກຄົນ ຫລື ການຈັດຕັ້ງ ທີ່ດຳເນີນກິດຈະການຕ່າງໆ ຕ້ອງຮັບປະກັນການປ້ອງກັນ ແລະ ການຄວບຄຸມມົນລະພິດທາງນ້ຳ, ດິນ, ອາກາດ, ສິ່ງເສດເຫລືອ, ສານເຄມີທີ່ເປັນພິດ, ທາດກຳມັນຕະພາບລັງສີ, ຄວາມສັ່ນສະເທືອນ, ສຽງ, ແສງ, ສີ ແລະ ກິ່ນ ຢ່າງເຂັ້ມງວດ.

ຫ້າມຖອກເທ, ລະບາຍນ້ຳເປື້ອນ, ນ້ຳເສັຍຄຸນນະພາບທີ່ເກີນມາດຕະຖານຄຸນນະພາບ ນ້ຳທີ່ໄດ້ກຳນົດໄວ້ ແບບຊະຊາຍໂດຍບໍ່ໄດ້ມີການບຳບັດກ່ອນ ລົງໃສ່ຕະຄອງຮ່ອງນ້ຳ, ແຫລ່ງນ້ຳທຳມະຊາດ ຫລື ບ່ອນອື່ນໆ.

ຫ້າມປ່ອຍ ຄວັນ, ອາຍ, ກິ່ນ, ສານເຄມີ ແລະ ຝຸ່ນລະອອງທີ່ເປັນພິດອອກເກີນມາດຕະຖານຄຸນນະພາບອາກາດທີ່ໄດ້ກຳນົດໄວ້.

ການຜະລິດ, ການນຳເຂົ້າ, ການນຳໃຊ້, ການຂົນສົ່ງ, ການເກັບຮັກສາ ແລະ ການທຳລາຍສານເຄມີທີ່ເປັນພິດ ຫລື ທາດກຳມັນຕະພາບລັງສີ ຕ້ອງປະຕິບັດຕາມລະບຽບການ ແລະ ມາດຕະຖານຕ່າງໆທີ່ໄດ້ກຳນົດໄວ້.

ຫ້າມສ້າງຄວາມສັ່ນສະເທືອນ, ສຽງ, ແສງ, ສີ ແລະກິ່ນ ເກີນມາດຕະຖານຄຸນນະພາບທີ່ໄດ້ກຳນົດໄວ້.

ຫ້າມຖອກເທສິ່ງເສດເຫລືອທຸກປະເພດຢ່າງຊະຊາຍ. ຕ້ອງກຳນົດເຂດຖອກເທສິ່ງເສດເຫລືອ ແຍກປະເພດກ່ອນນຳໄປຖິ້ມ, ຈູດ, ຝັງ ຫລື ທຳລາຍໃນເຂດທີ່ໄດ້ກຳນົດໃຫ້. ສົ່ງເສີມການນຳໃຊ້ເຕັກໂນໂລຊີກ່ຽວກັບການບຳບັດ, ການຜະລິດ ແລະ ການນຳໃຊ້ຄືນໃໝ່.

ຫ້າມນຳເຂົ້າ, ຂົນສົ່ງ, ເຄື່ອນຍ້າຍສິ່ງເສດເຫລືອທີ່ເປັນອັນຕະລາຍຜ່ານເຂດນ້ຳ, ດິນແດນ ຫລື ນ່ານຟ້າ ຂອງ ສປປລາວ.

# ພາກທີ IV
# ການແກ້ໄຂບັນຫາ ແລະ ການບູລະນະຟື້ນຟູສິ່ງແວດລ້ອມ

## ໝວດທີ 1
## ການແກ້ໄຂບັນຫາ ສິ່ງແວດລ້ອມ

### ມາດຕາ 24. ການແກ້ໄຂບັນຫາສິ່ງແວດລ້ອມ

ການແກ້ໄຂບັນຫາສິ່ງແວດລ້ອມ ແມ່ນການສະກັດກັ້ນ ຫລືການຕ້ານເຫດການທີ່ເກີດຂຶ້ນໄປພ້ອມໆກັບການປົວແປງ ແລະ ການບູລະນະສິ່ງທີ່ໄດ້ຮັບຜົນກະທົບຈາກເຫດການດັ່ງກ່າວໃຫ້ຄືນສູ່ສະພາບເດີມ ດ້ວຍການວາງ ແລະປະຕິບັດລະບຽບການ, ມາດຕະການ, ມາດຕະຖານຕ່າງໆກ່ຽວກັບຄຸນນະພາບສິ່ງແວດລ້ອມ.

### ມາດຕາ 25. ພັນທະໃນການແກ້ໄຂບັນຫາສິ່ງແວດລ້ອມ

ບຸກຄົນ ແລະການຈັດຕັ້ງຕ້ອງເປັນເຈົ້າການເຂົ້າຮ່ວມໃນການແກ້ໄຂບັນຫາສິ່ງແວດລ້ອມ.

ພົນລະເມືອງທຸກຄົນ ຫລື ການຈັດຕັ້ງ ມີສິດສະເໜີ ຫລືຮ້ອງຟ້ອງຕໍ່ການກະທຳໃດໜຶ່ງ ທີ່ກໍ່ໃຫ້ເກີດຜົນສະທ້ອນອັນບໍ່ດີຕໍ່ສິ່ງແວດລ້ອມ, ສ້າງຄວາມເສັຍຫາຍຕໍ່ສຸຂະພາບ, ຊີວິດຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ.

ຄຳສະເໜີ ຫລື ຄຳຮ້ອງຟ້ອງກ່ຽວກັບການກະທຳທີ່ກໍ່ໃຫ້ເກີດບັນຫາ ຕໍ່ສິ່ງແວດລ້ອມນັ້ນ ໃຫ້ສະເໜີຕໍ່ອຳນາດການປົກຄອງ ຫລື ອົງການຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມ ບ່ອນທີ່ເຫດການນັ້ນເກີດຂຶ້ນ ພິຈາລະນາແກ້ໄຂພາຍໃນກຳນົດ 30ວັນ ນັບແຕ່ວັນໄດ້ຮັບຄຳສະເໜີ ຫລື ຄຳຮ້ອງຟ້ອງເປັນຕົ້ນໄປ. ໃນກໍລະນີຮີບດ່ວນນັ້ນ ຕ້ອງໄດ້ພິຈາລະນາແກ້ໄຂຢ່າງທັນການ.

ຖ້າຫາກວ່າອຳນາດການປົກຄອງ ຫລື ອົງການຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມ ທີ່ໄດ້ຮັບການສະເໜີນັ້ນ ບໍ່ສາມາດແກ້ໄຂບັນຫາໄດ້ ໃຫ້ນຳສະເໜີຕໍ່ຂັ້ນເທິງຂອງຕົນ ຫລື ອົງການຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມຂັ້ນເທິງຖັດນັ້ນ ພາຍໃນກຳນົດ 7 ວັນ. ຄຳສະເໜີ ຫລື ຄຳຮ້ອງຟ້ອງດັ່ງກ່າວ ຈະໄດ້ຮັບການພິຈາລະນາແກ້ໄຂພາຍໃນກຳນົດ 30 ວັນ ແລ້ວແຈ້ງໃຫ້ຜູ້ສະເໜີຊາບ.

## ໝວດທີ 2
## ການບູລະນະ ຟື້ນຟູສິ່ງແວດລ້ອມ

### ມາດຕາ 26. ການບູລະນະ ຟື້ນຟູສິ່ງແວດລ້ອມ

ການບູລະນະຟື້ນຟູສິ່ງແວດລ້ອມ ແມ່ນ ການເຮັດໃຫ້ສິ່ງແວດລ້ອມທີ່ຖືກທຳລາຍ ຫລື ເສື່ອມໂຊມແລ້ວນັ້ນມີການຟື້ນຕົວ ແລະ ໄດ້ຮັບການປົວແປງໃຫ້ຢູ່ໃນສະພາບທີ່ດີຂຶ້ນ ແລະ ມີຄວາມສົມດຸນກັບລະບົບນິເວດວິທະຍາ.

### ມາດຕາ 27. ພັນທະໃນການບູລະນະ ຟື້ນຟູສິ່ງແວດລ້ອມ

ບຸກຄົນ ແລະ ການຈັດຕັ້ງ ມີພັນທະໃນການປະກອບສ່ວນຢ່າງຕັ້ງໜ້າເປັນຕົ້ນ: ສະຕິ ປັນຍາ, ແຮງງານ, ທຶນຮອນ ແລະ ວັດຖຸປະກອນຕ່າງໆ ເຂົ້າໃນການບູລະນະຟື້ນຟູຄືນສິ່ງແວດລ້ອມທີ່ຖືກທຳລາຍ ຫລື ເສື່ອມໂຊມນັ້ນ.

**ມາດຕາ 28. ການບູລະນະຟື້ນຟູ ເຂດທີ່ຖືກທຳລາຍຈາກໄພພິບັດ**

ບຸກຄົນ ຫລື ການຈັດຕັ້ງ ທີ່ດຳເນີນການຜະລິດ, ທຸລະກິດ, ການບໍລິການ ຫລື ກິດຈະການໃດໜຶ່ງ ທີ່ກໍ່ໃຫ້ເກີດໄພພິບັດ ຕ້ອງຮັບຜິດຊອບແກ້ໄຂ, ບູລະນະຟື້ນຟູຄືນ ເຂດທີ່ໄດ້ຮັບຄວາມເສັຍຫາຍນັ້ນ ພາຍໃຕ້ການຕິດຕາມ ກວດກາ ຂອງອຳນາດການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ.

ໃນກໍລະນີ ທີ່ມີໄພພິບັດທຳມະຊາດເກີດຂຶ້ນ ອຳນາດການປົກຄອງທ້ອງຖິ່ນ ແລະຂະແໜງການທີ່ກ່ຽວຂ້ອງຕ້ອງປະສານສົມທົບກັນ ເພື່ອມີວິທີການບູລະນະຟື້ນຟູຄືນເຂດດັ່ງກ່າວ.

**ມາດຕາ 29. ການບູລະນະມໍລະດົກທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ**

ສິ່ງປຸກສ້າງ ແລະ ສະຖາປັດຕະຍະກຳທີ່ມີຄຸນຄ່າທາງດ້ານປະຫວັດສາດ, ສິລະປະວັດທະນະທຳ ແລະ ຮ່ອງຮອຍປະຫວັດສາດຂອງຊາດ ຕ້ອງໄດ້ຮັບການປົກປັກຮັກສາ, ການສ້ອມແປງ ແລະ ການບູລະນະຟື້ນຟູ ເພື່ອຮັກສາໄວ້ທາງດ້ານສິລະປະ ແລະ ວັດທະນະທຳທີ່ເປັນ ເອກກະລັກຂອງຊາດ.

ສະຖານທີ່ທິວທັດທຳມະຊາດທີ່ມີທັດສະນີຍະພາບສິ່ງແວດລ້ອມອັນສວຍງາມ ຊຶ່ງໄດ້ຮັບຜົນກະທົບຈາກໄພພິບັດ ຕ້ອງໄດ້ຮັບການບູລະນະຟື້ນຟູຄືນ ແລະ ສະຫງວນຮັກສາ.

## ພາກທີ V
## ກອງທຶນ ປົກປັກຮັກສາສິ່ງແວດລ້ອມ

**ມາດຕາ 30. ກອງທຶນປົກປັກຮັກສາ ສິ່ງແວດລ້ອມ**

ລັດ ສົ່ງເສີມໃຫ້ມີການສ້າງຕັ້ງກອງທຶນປົກປັກຮັກສາສິ່ງແວດລ້ອມຂຶ້ນ ເພື່ອນຳໃຊ້ເຂົ້າໃນວຽກງານສຶກສາຄົ້ນຄ້ວາ, ປ້ອງກັນ, ແກ້ໄຂ ແລະບູລະນະຟື້ນຟູສິ່ງແວດລ້ອມ ລວມທັງການ ປົກປັກຮັກສາ ແລະ ການອະນຸລັກຊັບພະຍາກອນທຳມະຊາດ.

ສຳລັບການຈັດຕັ້ງ ແລະການຄຸ້ມຄອງກອງທຶນປົກປັກຮັກສາສິ່ງແວດລ້ອມ ຈະມີລະບຽບການສະເພາະ.

**ມາດຕາ 31. ແຫລ່ງກອງທຶນປົກປັກຮັກສາສິ່ງແວດລ້ອມ**

ກອງທຶນປົກປັກຮັກສາສິ່ງແວດລ້ອມ ໄດ້ມາຈາກແຫລ່ງຕ່າງໆ ດັ່ງນີ້:

1. ງົບປະມານຂອງລັດ;
2. ໂຄງການພັດທະນາ ແລະ ກິດຈະການຕ່າງໆ;

3. ການຊ່ວຍເຫລືອ ຂອງອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ;
4. ການປະກອບສ່ວນຂອງພາກສ່ວນທຸລະກິດ ແລະ ບຸກຄົນທົ່ວໄປ;
5. ດອກເບັ້ຍ ຫລື ຜົນກຳໄລ ທີ່ໄດ້ຈາກກອງທຶນ.

**ມາດຕາ 32. ການນຳໃຊ້ກອງທຶນປົກປັກຮັກສາສິ່ງແວດລ້ອມ**

ກອງທຶນປົກປັກຮັກສາສິ່ງແວດລ້ອມ ຈະຖືກນຳໃຊ້ເຂົ້າໃນວຽກງານ ດັ່ງຕໍ່ໄປນີ້:

1. ການແກ້ໄຂບັນຫາສິ່ງແວດລ້ອມທີ່ຮີບດ່ວນ ແລະ ສຳຄັນ;
2. ໂຄງການຄົ້ນຄວ້າວິທະຍາສາດເຕັກໂນໂລຊີ ເພື່ອຮັບໃຊ້ວຽກງານປົກປັກຮັກສາ ສິ່ງແວດລ້ອມ, ການຄຸ້ມຄອງ, ການກວດກາ ແລະ ການຈັດຕັ້ງປະຕິບັດນິຕິກຳອື່ນໆ ກ່ຽວກັບສິ່ງແວດລ້ອມ;
3. ການສົ່ງເສີມການສຶກສາ, ການຝຶກອົບຮົມ ແລະການສ້າງຈິດສຳນຶກດ້ານສິ່ງແວດລ້ອມ;
4. ການຊຸກຍູ້ ຂະບວນການເຄື່ອນໄຫວວຽກງານປົກປັກຮັກສາສິ່ງແວດລ້ອມ ເປັນຕົ້ນ: ວັນສິ່ງແວດລ້ອມໂລກ, ວັນປູກຕົ້ນໄມ້, ວັນປ່ອຍປາແຫ່ງຊາດ ແລະ ອື່ນໆ;
5. ການບໍລິຫານກອງທຶນ.

## ພາກທີ VI
## ການພົວພັນ ແລະ ການຮ່ວມມືສາກົນດ້ານສິ່ງແວດລ້ອມ

**ມາດຕາ 33. ການພົວພັນ ແລະ ການຮ່ວມມືສາກົນດ້ານສິ່ງແວດລ້ອມ**

ລັດສົ່ງເສີມການພົວພັນ, ການຮ່ວມມືກັບຕ່າງປະເທດ ແລະ ບັນດາອົງການຈັດຕັ້ງ ສາກົນ ກ່ຽວກັບວຽກງານປົກປັກຮັກສາສິ່ງແວດລ້ອມ ຍາດແຍ່ງເອົາການຊ່ວຍເຫລືອ, ແລກປ່ຽນບົດຮຽນ, ກໍ່ສ້າງ ແລະຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ພະນັກງານກ່ຽວ ກັບການຄົ້ນຄວ້ານຳໃຊ້ວິທະຍາສາດເຕັກໂນໂລຊີທີ່ກ້າວໜ້າ, ເຂົ້າຮ່ວມໃນການເຄື່ອນໄຫວສາກົນ ກ່ຽວກັບການປ້ອງກັນ ແລະການແກ້ໄຂບັນຫາສິ່ງແວດລ້ອມ, ປະຕິບັດຕາມສົນທິສັນຍາສາກົນທີ່ຕົນໄດ້ເຂົ້າຮ່ວມເປັນພາຄີ ຫລື ສັນຍາລະຫວ່າງປະເທດທີ່ຕົນໄດ້ເຊັນຮ່ວມກ່ຽວກັບສິ່ງແວດລ້ອມ.

**ມາດຕາ 34. ການແກ້ໄຂຂໍ້ພິພາດລະຫວ່າງປະເທດດ້ານສິ່ງແວດລ້ອມ**

ຂໍ້ພິພາດລະຫວ່າງປະເທດດ້ານສິ່ງແວດລ້ອມທີ່ເກີດຂຶ້ນ ແລະສິ່ງຜົນສະທ້ອນອັນບໍ່ດີຕໍ່ ສິ່ງແວດລ້ອມຂອງສປປລາວ ຈະໄດ້ຖືກແກ້ໄຂດ້ວຍການຊອກວິທີແກ້ໄຂຮ່ວມກັນ ບົນພື້ນຖານຂອງສົນທິສັນຍາສາກົນທີ່ຕົນໄດ້ເຂົ້າຮ່ວມເປັນພາຄີ ຫລືສັນຍາລະຫວ່າງປະເທດທີ່ຕົນ ໄດ້ເຊັນຮ່ວມ.

## ພາກທີ VII
## ການຄຸ້ມຄອງ ແລະ ການກວດກາສິ່ງແວດລ້ອມ

**ມາດຕາ 35. ອົງການຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມ**

ອົງການຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມ ປະກອບດ້ວຍ:

1. ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ;
2. ໜ່ວຍງານຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມຂອງກະຊວງ;
3. ໜ່ວຍງານຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມແຂວງ, ກຳແພງນະຄອນ ແລະ ເຂດພິເສດ;
4. ໜ່ວຍງານຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມເມືອງ;
5. ອຳນາດການປົກຄອງບ້ານ.

**ມາດຕາ 36. ສິດ ແລະໜ້າທີ່ຂອງອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ**

ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຊຶ່ງເປັນອົງການຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມຂັ້ນສູນກາງ ມີສິດແລະຫນ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ ລັດຖະບານໃນການສ້າງ ແລະຜັນຂະຫຍາຍແຜນຍຸດທະສາດກ່ຽວກັບສິ່ງແວດລ້ອມໃຫ້ກາຍເປັນແຜນການ, ໂຄງການລະອຽດ ແລະ ລະບຽບການເພື່ອຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມ;
2. ຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມ ພ້ອມທັງລາຍງານ ສະພາບສິ່ງແວດລ້ອມໃນຂອບເຂດທົ່ວປະເທດໃຫ້ລັດຖະບານຢ່າງເປັນປົກກະຕິ;
3. ເປັນໃຈກາງໃນການປະສານສົມທົບກັບບັນດາຂະແໜງການ ແລະ ອຳນາດການປົກຄອງທ້ອງຖິ່ນຂັ້ນຕ່າງໆ ເພື່ອຈັດຕັ້ງຄຸ້ມຄອງ ແລະກວດກາທຸກການເຄື່ອນໄຫວກ່ຽວກັບ ວຽກງານສິ່ງແວດລ້ອມ;
4. ຄົ້ນຄວ້າ, ວິໄຈ, ຊອກຫາວິທີການປ້ອງກັນ, ແກ້ໄຂບັນຫາ ແລະ ບູລະນະຟື້ນຟູ ສິ່ງແວດລ້ອມ ໂດຍນຳໃຊ້ຄວາມກ້າວຫນ້າທາງດ້ານວິທະຍາສາດ ແລະເຕັກໂນໂລຊີ;
5. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດແຜນຍຸດທະສາດ, ແຜນການ, ໂຄງການ ແລະ ລະບຽບກົດຫມາຍຕ່າງໆ ກ່ຽວກັບສິ່ງແວດລ້ອມ;
6. ອອກໃບອະນຸຍາດ ຫລື ຖອນໃບອະນຸຍາດຂອງການຈັດຕັ້ງໃດໜຶ່ງ ທີ່ດຳເນີນການບໍລິການດ້ານວິຊາການສິ່ງແວດລ້ອມ;
7. ແນະນຳໃຫ້ໂຄງການພັດທະນາ ແລະກິດຈະການຕ່າງໆ ເຮັດການປະເມີນຜົນກະ ທົບ ຕໍ່ສິ່ງແວດລ້ອມ ຕາມລະບຽບການ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
8. ຮັບ ແລະແກ້ໄຂຄຳສະເຫນີຂອງປະຊາຊົນ ແລະ ພາກສ່ວນຕ່າງໆກ່ຽວກັບ ບັນຫາສິ່ງແວດລ້ອມ;
9. ສົມທົບກັບພາກສ່ວນກ່ຽວຂ້ອງທີ່ມີສິດອຳນາດສັ່ງດັດແກ້, ໂຈະ, ຍົກຍ້າຍ ຫລືຍຸບ ເລີກກິດຈະການໃດຫນຶ່ງ ທີ່ກໍ່ໃຫ້ເກີດຜົນສະທ້ອນອັນບໍ່ດີຕໍ່ສຸຂະພາບ, ຊີວິດຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ;
10. ກໍ່ສ້າງ ແລະ ຍົກລະດັບພະນັກງານວິຊາການດ້ານສິ່ງແວດລ້ອມ ພ້ອມທັງສຶກສາ ອົບຮົມ, ສ້າງຈິດສຳນຶກໃຫ້ແກ່ທຸກພາກສ່ວນຂອງສັງຄົມ, ສ້າງຂະບວນການປົກປັກຮັກສາສິ່ງແວດ

ລ້ອມໃນທົ່ວປະເທດ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນ;

11. ຈັດຕັ້ງເຜີຍແຜ່, ສັງລວມ ແລະ ຕີລາຄາລະບົບຂໍ້ມູນຂ່າວສານກ່ຽວກັບສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ ເພື່ອຮັບໃຊ້ແຜນການພັດທະນາເສດຖະກິດ-ສັງຄົມ;
12. ພົວພັນ ແລະ ຮ່ວມມືກັບສາກົນໃນຂົງເຂດວຽກງານປົກປັກຮັກສາສິ່ງແວດລ້ອມ;
13. ປະຕິບັດສິດ ແລະໜ້າທີ່ອື່ນໆກ່ຽວກັບການປົກປັກຮັກສາສິ່ງແວດລ້ອມຕາມການ ມອບໝາຍຂອງລັດຖະບານ ຫລື ຕາມລະບຽບກົດໝາຍທີ່ໄດ້ກຳນົດໄວ້.

**ມາດຕາ 37. ສິດ ແລະ ໜ້າທີ່ຂອງໜ່ວຍງານຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມຂອງກະຊວງ**

ກະຊວງທີ່ເຫັນວ່າມີຄວາມຈຳເປັນຈັດຕັ້ງໜ່ວຍງານຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມຂອງຕົນຂຶ້ນ ຕ້ອງໄດ້ປະສານສົມທົບກັບອົງການວິທະຍາສາດເຕັກໂນໂລຊີ ແລະສິ່ງແວດລ້ອມ.

ໜ່ວຍງານຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມຂອງກະຊວງ ມີສິດ ແລະ ໜ້າທີ່ເຄື່ອນໄຫວວຽກງານພາຍໃນຂະແໜງການຂອງຕົນ ດັ່ງນີ້:

1. ສ້າງ ແລະ ຈັດຕັ້ງປະຕິບັດແຜນການ ແລະ ລະບຽບການກ່ຽວກັບການປົກປັກຮັກສາສິ່ງແວດລ້ອມທີ່ພົວພັນກັບຂະແໜງການຂອງຕົນ ໂດຍອີງໃສ່ແຜນການ ແລະ ລະບຽບການລວມທີ່ອົງການວິທະຍາສາດເຕັກໂນໂລຊີ ແລະສິ່ງແວດລ້ອມວາງອອກ;
2. ຄົ້ນຄວ້າ ວິໄຈ ແລະ ຊອກຫາວິທີການປ້ອງກັນ, ແກ້ໄຂບັນຫາ ແລະ ບູລະນະຟື້ນຟູສິ່ງແວດລ້ອມທີ່ຕິດພັນກັບຂະແໜງການຂອງຕົນໂດຍ ນຳໃຊ້ຄວາມກ້າວໜ້າ ທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ;
3. ແນະນຳໃຫ້ໂຄງການພັດທະນາ ແລະກິດຈະການຕ່າງໆທີ່ຂຶ້ນກັບຂະແໜງການ ຂອງຕົນເຮັດການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
4. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດລະບຽບກົດໝາຍກ່ຽວກັບ ການປົກປັກຮັກສາ ສິ່ງແວດລ້ອມ;
5. ສະເໜີໃຫ້ ການຈັດຕັ້ງທີ່ມີສິດອຳນາດ ສັ່ງດັດແກ້, ໂຈະ, ຍົກຍ້າຍ ຫລື ຍຸບເລີກ ກິດຈະການໃດໜຶ່ງໃນຂະແໜງການຂອງຕົນ ທີ່ກໍ່ໃຫ້ເກີດຜົນສະທ້ອນອັນບໍ່ດີ ຕໍ່ ສຸຂະພາບ, ຊີວິດຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ;
6. ລາຍງານ, ເຂົ້າຮ່ວມປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນກ່ຽວກັບວຽກງານ ສິ່ງແວດລ້ອມກັບອົງການວິທະຍາສາດ ເຕັກໂນໂລຊີ ແລະສິ່ງແວດລ້ອມ,ອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອແກ້ໄຂບັນຫາສິ່ງແວດລ້ອມ;
7. ກໍ່ສ້າງ ແລະ ຍົກລະດັບພະນັກງານວິຊາການດ້ານສິ່ງແວດລ້ອມ, ສຶກສາອົບຮົມ ແລະສ້າງຈິດສຳນຶກດ້ານສິ່ງແວດລ້ອມໃຫ້ທຸກພາກສ່ວນໃນຂະແໜງການຂອງຕົນ;
8. ຈັດຕັ້ງເຜີຍແຜ່, ສັງລວມ ແລະ ຕີລາຄາຂໍ້ມູນຂ່າວສານກ່ຽວກັບສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ;
9. ພົວພັນ ແລະ ຮ່ວມມືກັບສາກົນ ໃນຂົງເຂດວຽກງານປົກປັກຮັກສາສິ່ງແວດລ້ອມ;

10. ປະຕິບັດສິດ ແລະໜ້າທີ່ອື່ນໆກ່ຽວກັບການປົກປັກຮັກສາສິ່ງແວດລ້ອມຕາມ ການມອບໝາຍຂອງກະຊວງ ຫລື ຕາມລະບຽບກົດໝາຍ ທີ່ໄດ້ກຳນົດໄວ້.

**ມາດຕາ 38. ໜ່ວຍງານຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມ ແຂວງ, ກຳແພງນະຄອນ ແລະ ເຂດ ພິເສດ**

ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ຈັດຕັ້ງໜ່ວຍງານຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມຂອງຕົນຂຶ້ນ ໂດຍປະສານສົມທົບກັບອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ.

ໜ່ວຍງານຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມແຂວງ, ກຳແພງນະຄອນ ແລະ ເຂດ ພິເສດ ມີສິດ ແລະ ໜ້າທີ່ເຄື່ອນໄຫວວຽກງານພາຍໃນທ້ອງຖິ່ນຂອງຕົນ ດັ່ງນີ້:

1. ສ້າງ ແລະ ຈັດຕັ້ງປະຕິບັດແຜນການ ແລະ ລະບຽບການກ່ຽວກັບການປົກປັກຮັກສາສິ່ງແວດລ້ອມພາຍໃນແຂວງ, ກຳແພງນະຄອນ ແລະ ເຂດພິເສດຂອງຕົນ ໂດຍ ອີງໃສ່ແຜນການ ແລະ ລະບຽບການລວມ ກ່ຽວກັບ ການປົກປັກຮັກສາສິ່ງແວດລ້ອມ;
2. ຄົ້ນຄວ້າ ວິໄຈ ແລະ ຊອກຫາວິທີການປ້ອງກັນ, ແກ້ໄຂບັນຫາ ແລະ ບູລະນະຟື້ນຟູສິ່ງແວດລ້ອມໃນທ້ອງຖິ່ນຂອງຕົນ ໂດຍນຳໃຊ້ຄວາມກ້າວໜ້າທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ;
3. ລາຍງານ, ເຂົ້າຮ່ວມປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນກ່ຽວກັບວຽກງານ ສິ່ງແວດລ້ອມກັບ ອົງການວິທະຍາສາດເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ອຳນາດການປົກຄອງ ແລະ ຂະແໜງການທີ່ກ່ຽວຂ້ອງໃນທ້ອງຖິ່ນຂອງຕົນ ເພື່ອແກ້ໄຂບັນຫາສິ່ງແວດລ້ອມ;
4. ຕິດຕາມ, ກວດກາການຈັດຕັ້ງປະຕິບັດ ກົດໝາຍ, ດຳລັດ, ຂໍ້ກຳນົດ, ກົດລະບຽບຕ່າງໆ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ;
5. ຮັບ ແລະ ແກ້ໄຂ ຄຳສະເໜີຂອງປະຊາຊົນ ແລະ ພາກສ່ວນຕ່າງໆກ່ຽວກັບບັນຫາສິ່ງແວດລ້ອມ;
6. ສະເໜີໃຫ້ການຈັດຕັ້ງທີ່ມີສິດອຳນາດສັ່ງດັດແກ້, ໂຈະ, ຍົກຍ້າຍ ຫລື ຍຸບເລີກ ກິດຈະການໃດໜຶ່ງຢູ່ໃນທ້ອງຖິ່ນຂອງຕົນ ທີ່ກໍ່ໃຫ້ເກີດຜົນສະທ້ອນອັນບໍ່ດີຕໍ່ສຸຂະພາບ, ຊີວິດຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ;
7. ເກັບກຳ, ສັງລວມ, ຄົ້ນຄວ້າ, ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ;
8. ກໍ່ສ້າງ ແລະ ຍົກລະດັບພະນັກງານວິຊາການດ້ານສິ່ງແວດລ້ອມ, ສຶກສາອົບຮົມ ແລະ ສ້າງຈິດສຳນຶກຄວາມຮັບຮູ້ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມໃຫ້ແກ່ປະຊາຊົນ ແລະ ພາກສ່ວນຕ່າງໆ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນໆກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ຕາມການ ມອບໝາຍຂອງເຈົ້າແຂວງ, ເຈົ້າຄອງກຳແພງນະຄອນ ແລະ ຫົວໜ້າເຂດພິເສດ ຫລື ຕາມລະບຽບກົດໝາຍ ທີ່ໄດ້ກຳນົດໄວ້.

**ມາດຕາ 39. ສິດ ແລະ ໜ້າທີ່ຂອງໜ່ວຍງານຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມ ເມືອງ**

ເມືອງ ຈັດຕັ້ງໜ່ວຍງານຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມເມືອງຂຶ້ນ ໂດຍປະສານສົມທົບກັບຫນ່ວຍງານຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມ ຂອງແຂວງ, ກຳແພງນະຄອນ ແລະ ເຂດພິເສດ ບ່ອນທີ່ຕົນຂຶ້ນກັບ.

ຫນ່ວຍງານຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມເມືອງ ມີສິດ ແລະ ໜ້າທີ່ເຄື່ອນໄຫວວຽກງານພາຍໃນເມືອງຂອງຕົນ ດັ່ງນີ້:

1. ສ້າງ ແລະ ຈັດຕັ້ງປະຕິບັດແຜນການ ແລະ ລະບຽບການກ່ຽວກັບການປົກປັກຮັກສາ ສິ່ງແວດລ້ອມພາຍໃນເມືອງຂອງຕົນ ໂດຍອີງໃສ່ແຜນການ ແລະລະບຽບການກ່ຽວກັບ ການປົກປັກຮັກສາສິ່ງແວດລ້ອມຂອງແຂວງ, ກຳແພງນະຄອນ ແລະ ເຂດພິເສດ ທີ່ຕົນຂຶ້ນກັບ;
2. ຄົ້ນຄວ້າ, ວິໄຈ ແລະ ຊອກຫາວິທີການປ້ອງກັນ, ແກ້ໄຂບັນຫາ ແລະ ບູລະນະຟື້ນຟູສິ່ງແວດລ້ອມຢູ່ໃນເມືອງຂອງຕົນ ໂດຍນຳໃຊ້ຄວາມກ້າວຫນ້າທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ;
3. ຕິດຕາມ, ກວດກາການຈັດຕັ້ງປະຕິບັດກົດຫມາຍ, ດຳລັດ, ຂໍ້ກຳນົດກົດລະບຽບຕ່າງໆ ກ່ຽວກັບການປົກປັກຮັກສາ ສິ່ງແວດລ້ອມ;
4. ລາຍງານ, ເຂົ້າຮ່ວມປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນກ່ຽວກັບວຽກງານ ສິ່ງແວດລ້ອມກັບ ຫນ່ວຍງານຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມ ແຂວງ, ກຳແພງນະຄອນ ແລະເຂດພິເສດ, ອຳນາດການປົກຄອງທ້ອງຖິ່ນ ແລະ ຂະແຫນງການ ທີ່ກ່ຽວຂ້ອງໃນເມືອງຂອງຕົນ ເພື່ອແກ້ໄຂບັນຫາສິ່ງແວດລ້ອມ;
5. ຮັບ ແລະ ແກ້ໄຂ ຄຳສະເຫນີຂອງປະຊາຊົນ ແລະ ພາກສ່ວນຕ່າງໆກ່ຽວກັບບັນຫາສິ່ງແວດລ້ອມ;
6. ສະເຫນີໃຫ້ການຈັດຕັ້ງທີ່ມີສິດອຳນາດ ສັ່ງດັດແກ້, ໂຈະ, ຍົກຍ້າຍ ຫລືຍຸບເລີກ ກິດຈະການໃດຫນຶ່ງພາຍໃນເມືອງຂອງຕົນ ທີ່ກໍ່ໃຫ້ເກີດຜົນສະທ້ອນອັນບໍ່ດີຕໍ່ສຸຂະພາບ, ຊີວິດຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ;
7. ເກັບກຳ, ສັງລວມ, ຄົ້ນຄວ້າ ແລະເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ;
8. ສຶກສາອົບຮົມ ແລະ ສ້າງຈິດສຳນຶກຄວາມຮັບຮູ້ກ່ຽວກັບ ວຽກງານປົກປັກຮັກສາ ສິ່ງແວດລ້ອມ ໃຫ້ແກ່ປະຊາຊົນ ແລະ ພາກສ່ວນຕ່າງໆ ພາຍໃນເມືອງຂອງຕົນ;
9. ປະຕິບັດສິດ ແລະ ຫນ້າທີ່ອື່ນໆກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ຕາມການມອບຫມາຍຂອງເຈົ້າເມືອງ, ຫນ່ວຍງານຄຸ້ມຄອງ ແລະ ກວດກາສິ່ງແວດລ້ອມແຂວງ, ກຳແພງນະຄອນ, ເຂດພິເສດ ຫລື ຕາມລະບຽບກົດຫມາຍທີ່ໄດ້ ກຳນົດໄວ້.

**ມາດຕາ 40. ສິດ ແລະ ໜ້າທີ່ຂອງອຳນາດການປົກຄອງບ້ານກ່ຽວກັບການຄຸ້ມຄອງ ແລະ ກວດກາ ສິ່ງແວດລ້ອມ**

ອຳນາດການປົກຄອງບ້ານ ມີສິດ ແລະ ໜ້າທີ່ກ່ຽວກັບການຄຸ້ມຄອງ ແລະ ກວດກາ ສິ່ງແວດລ້ອມພາຍໃນບ້ານຂອງຕົນ ດັ່ງນີ້:

1. ສ້າງ ແລະ ຈັດຕັ້ງປະຕິບັດ ແຜນການ, ລະບຽບການກ່ຽວກັບການປົກປັກຮັກສາ ສິ່ງແວດລ້ອມ ໂດຍອີງໃສ່ແຜນການ, ຂໍ້ກຳນົດ, ກົດລະບຽບ, ຄຳແນະນຳກ່ຽວກັບການປົກປັກຮັກສາສິ່ງແວດລ້ອມຂອງເມືອງ;
2. ໂຄສະນາ, ສຶກສາອົບຮົມ, ປຸກລະດົມຊຸກຍູ້, ຂົນຂວາຍປະຊາຊົນເຂົ້າຮ່ວມໃນການ ປ້ອງກັນ, ແກ້ໄຂບັນຫາ ແລະ ບູລະນະຟື້ນຟູສິ່ງແວດລ້ອມຂອງບ້ານ;
3. ຕິດຕາມ, ກວດກາການຈັດຕັ້ງປະຕິບັດ ແຜນການ, ຂໍ້ກຳນົດ, ກົດລະບຽບ ແລະ ຄຳແນະນຳຕ່າງໆ ກ່ຽວກັບການປົກປັກຮັກສາ ສິ່ງແວດລ້ອມ;
4. ລາຍງານ, ເຂົ້າຮ່ວມປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນກ່ຽວກັບວຽກງານ ສິ່ງແວດລ້ອມກັບໜ່ວຍງານຄຸ້ມຄອງ ແລະກວດກາສິ່ງແວດລ້ອມເມືອງ, ອຳນາດການປົກຄອງເມືອງ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອແກ້ໄຂບັນຫາສິ່ງແວດລ້ອມ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍຂອງເມືອງ ຫລື ໜ່ວຍງານ ຄຸ້ມຄອງ ແລະກວດກາສິ່ງແວດລ້ອມເມືອງ ຫລືຕາມລະບຽບກົດໝາຍທີ່ໄດ້ກຳນົດໄວ້.

**ມາດຕາ 41. ການກວດກາ ສິ່ງແວດລ້ອມ**

ການກວດກາສິ່ງແວດລ້ອມແມ່ນ ການຕິດຕາມກວດກາ ການເຄື່ອນໄຫວກ່ຽວກັບການປ້ອງກັນ, ການແກ້ໄຂບັນຫາ, ການບູລະນະຟື້ນຟູສິ່ງແວດລ້ອມ, ການຂຸດຄົ້ນ, ການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ການຄວບຄຸມມົນລະພິດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ເພື່ອແນໃສ່ເຮັດໃຫ້ການປົກປັກຮັກສາສິ່ງແວດລ້ອມດຳເນີນໄປຢ່າງມີປະສິດທິຜົນ.

**ມາດຕາ 42. ປະເພດການກວດກາ**

ການກວດກາມີ 3 ປະເພດດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ;
2. ການກວດກາ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາ ແບບກະທັນຫັນ.

ການກວດກາ ຕາມລະບົບປົກກະຕິ ແມ່ນການກວດກາ ທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນຊຶ່ງແຈ້ງໃຫ້ຜູ້ທີ່ຈະຖືກກວດກາຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ທີ່ຈະຖືກກວດກາຊາບລ່ວງໜ້າ.

ໃນການດຳເນີນການກວດກາສິ່ງແວດລ້ອມ ເຈົ້າໜ້າທີ່ສິ່ງແວດລ້ອມຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍຢ່າງເຂັ້ມງວດ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 43. ນະໂຍບາຍ ຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ ຫລືການຈັດຕັ້ງ ທີ່ໄດ້ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນວຽກງານປົກປັກຮັກສາສິ່ງແວດລ້ອມ ແລະຊັບພະຍາກອນທຳມະຊາດ ຈະໄດ້ຮັບການຍ້ອງຍໍ ຫລືການປະຕິບັດນະໂຍບາຍອື່ນໆຕາມຄວາມເໝາະສົມ.

**ມາດຕາ 44. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຫລື ລະບຽບການຕ່າງໆ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ຈະຖືກສຶກສາອົບຮົມ, ປັບໃໝ, ປະຕິບັດທາງແພ່ງ ຫລື ລົງໂທດທາງອາຍາຕາມແຕ່ກໍລະນີເບົາ ຫລື ໜັກ.

**ມາດຕາ 45. ມາດຕະການສຶກສາອົບຮົມ**

ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຫລື ລະບຽບການຕ່າງໆກ່ຽວກັບການປົກປັກຮັກສາສິ່ງແວດລ້ອມໃນສະຖານເບົາບາງ ຈະຖືກຕັກເຕືອນ ແລະສຶກສາອົບຮົມ.

**ມາດຕາ 46. ມາດຕະການປັບໃໝ**

ບຸກຄົນ ຫລື ການຈັດຕັ້ງຈະຖືກປັບໃໝໃນກໍລະນີ ດັ່ງນີ້:

1. ຜູ້ທີ່ຖືກສຶກສາອົບຮົມແລ້ວ ແຕ່ຫາກບໍ່ເຂັດຫລາບ;
2. ຖິ້ມ ຫລື ຖອກເທສິ່ງເສດເຫລືອແບບຊະຊາຍ, ສ້າງຄວາມເປິະເປື້ອນຊຶ່ງເປັນ ຜົນກະທົບ ຕໍ່ຄວາມເປັນລະບຽບຮຽບຮ້ອຍ, ຄວາມສະອາດສວຍງາມຂອງບ້ານເມືອງ;
3. ເຮັດໃຫ້ຄຸນນະພາບ ຂອງນ້ຳ, ດິນ, ອາກາດເສື່ອມໂຊມລົງ ເກີນມາດຕະຖານຄຸນນະພາບສິ່ງແວດລ້ອມທີ່ໄດ້ກຳນົດໄວ້;
4. ນຳໃຊ້ ຫລື ກໍ່ໃຫ້ເກີດຄວາມສັ່ນສະເທືອນ, ສຽງ, ແສງ, ສີ, ກິ່ນ, ສານເຄມີທີ່ເປັນພິດ ຫລືທາດກຳມັນຕະພາບລັງສີ ເກີນມາດຕະຖານ ຫລື ລະບຽບການທີ່ໄດ້ກຳນົດໄວ້ ຊຶ່ງເປັນອັນຕະລາຍຕໍ່ສຸຂະພາບຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ;
5. ບໍ່ປະຕິບັດຕາມການກຳນົດໃນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
6. ປະຕິເສດ ຫລື ບໍ່ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ກວດກາສິ່ງແວດລ້ອມ.

ລະບຽບການປັບໃໝຈະໄດ້ມີການກຳນົດຕ່າງຫາກ.

**ມາດຕາ 47. ມາດຕະການທາງແພ່ງ**

ບຸກຄົນ ຫລື ການຈັດຕັ້ງທີ່ໄດ້ລະເມີດກົດຫມາຍສະບັບນີ້ ແລະ ລະບຽບການຕ່າງໆ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ຊຶ່ງສ້າງຄວາມເສັຍຫາຍແກ່ຊັບສິນຂອງລັດ, ຂອງລວມຫມູ່ ຫລື ຂອງບຸກຄົນ ຕ້ອງໄດ້ຮັບຜິດຊອບທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 48. ມາດຕະການທາງອາຍາ**

ບຸກຄົນ ທີ່ໄດ້ລະເມີດກົດຫມາຍສະບັບນີ້ ແລະ ລະບຽບການຕ່າງໆກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ຊຶ່ງເປັນການກະທຳຜິດທາງອາຍາ ເຊັ່ນ: ປອມແປງໃບອະນຸຍາດ ຫລື ໃບຢັ້ງຢືນດ້ານສິ່ງແວດລ້ອມ, ບໍ່ປະຕິບັດຕາມມາດຕະຖານຄຸນນະພາບສິ່ງແວດລ້ອມ ຫລື ການກະທຳອື່ນໆກ່ຽວກັບສິ່ງແວດລ້ອມທີ່ເປັນສາເຫດພາໃຫ້ ຄົນເສັຍສຸຂະພາບ, ພິການ ຫລື ເສັຍຊີວິດ ຈະຖືກລົງໂທດຕາມກົດຫມາຍອາຍາ.

**ມາດຕາ 49. ມາດຕະການໂທດເພີ່ມ**

ນອກຈາກໂທດຕົ້ນຕໍ ທີ່ໄດ້ກຳນົດໃນມາດຕາ 45, 46, 47 ແລະ 48 ຂ້າງເທິງນີ້ແລ້ວ ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ລະເມີດກົດຫມາຍສະບັບນີ້ ອາດຈະຖືກປະຕິບັດມາດຕະການໂທດເພີ່ມອີກ ເຊັ່ນ: ການໂຈະ, ການຖອນໃບອະນຸຍາດ ຫລື ຍຸບເລີກກິດຈະການ, ການຮິບພາຫະນະອຸປະກອນທີ່ນຳໃຊ້ເຂົ້າໃນການກະທຳຜິດນັ້ນ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 50. ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງ ປະຕິບັດກົດຫມາຍສະບັບນີ້.

**ມາດຕາ 51. ຜົນສັກສິດ ຂອງກົດຫມາຍ**

ກົດຫມາຍສະບັບນີ້ມີຜົນສັກສິດພາຍຫລັງ 90 ວັນ ນັບແຕ່ມື້ປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ. ຂໍ້ກຳນົດ, ກົດລະບຽບທີ່ຂັດກັບກົດຫມາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ວຽງຈັນ, ວັນທີ 3 ເມສາ 1999

ປະທານສະພາແຫ່ງຊາດ